ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# BCEL OneHeart ສະແດງເຈດຈຳນົງຈະມອບເງິນທີ່ລະດົມໄດ້ຈາກສັງຄົມ ຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມທີ່ ແຂວງ ອັດຕະປື ຄັ້ງທີ 1 ມູນຄ່າ 2.000 ລ້ານກີບ ໃນວັນທີ 26/07/2018

ໃນວັນທີ 26/07/2018 ເວລາ 13:50 ໂມງ ທີ່ຫ້ອງວ່າການປົກຄອງ ແຂວງ ອັດຕະປື ຄະນະນຳຂອງ ທຄຕລ ນຳທີມໂດຍ ທ່ານ ຄຳຊຽນ ມົງບຸບຜາ ຮອງຜູ້ອຳນວຍການໃຫຍ່ ພ້ອມດ້ວຍຕົວແທນສາມອົງການຈັດຕັ້ງມະຫາຊົນ ທຄຕລ ຕາງໜ້າຜູ້ຮ່ວມບໍລິຈາກຜ່ານ BCEL OneHeart ກໍ່ໄດ້ສະແດງເຈດຈຳນົງເພື່ອຈະມອບເງິນທີ່ລະດົມໄດ້ຈາກສັງຄົມ ຜ່ານ BCEL OneHeart ຈຳນວນ **2.000 ລ້ານກີບ** (ຄັ້ງທີ 1) ໃຫ້ແກ່ຜູ້ປະສົບໄພພິບັດນ້ຳຖ້ວມທີ່ ແຂວງ ອັດຕະປື ໂດຍກຳນົດເປັນວົງເງິນໄວ້, ສ່ວນການນຳໃຊ້ເງິນຕົວຈິງ, ຄະນະກຳມະການຂອງ ທຄຕລ ຈະໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນຜູ້ປະສົບໄພພິບັດເພື່ອນຳໃຊ້ທຶນດັ່ງກ່າວຈັດຫາສິ່ງຈຳເປັນໃຫ້ແກ່ຜູ້ປະສົບໄພ ເພື່ອຮັບປະກັນການຊ່ວຍເຫຼືອຖືກຕ້ອງຕາມຄວາມຕ້ອງການ ແລະ ໄປເຖິງຜູ້ປະສົບໄພຢ່າງແທ້ຈິງ. ໃນຂັ້ນຕອນການມອບຮັບເຄື່ອງຂອງບໍລະຈາກແຕ່ລະຄັ້ງ ທຄຕລ ຈະເຊີນພາກສ່ວນກ່ຽວຂ້ອງ ແລະ ຜູ້ບໍລິຈາກມີສ່ວນຮ່ວມນຳ. ໃນຄັ້ງນີ້ຕາງໜ້າຜູ້ປະສົບໄພພິບັດຮັບໂດຍ ທ່ານ ເລັດ ໄຊຍະພອນ ເລຂາພັກ ແຂວງ, ເຈົ້າແຂວງງອັດຕະປື ໂດຍມີທີມງານ ທຄຕລ, ຕາງໜ້າຜູ້ບໍລິຈາກ ແລະ ນັກຂ່າວສື່ມ່ວນຊົນເຂົ້າຮ່ວມ.




ຮູບພາບ: ການມອບ-ຮັບເງິນທີ່ໄດ້ຮັບການບໍລິຈາກຜ່ານ BCEL One Heart ເພື່ອຊ່ວຍເຫຼືອຜູ້ໄດ້ຮັບໄພພິບັດນ້ຳຖ້ວມທີ່ແຂວງອັດຕະປື

#ເງິນດັ່ງກ່າວແມ່ນເງິນຂອງສັງຄົມທີ່ໄດ້ຮ່ວມກັນບໍລິຈາກຫຼາຍກວ່າ 23.000 ຄົນ ທັງພາຍໃນ ແລະ ຕ່າງປະເທດ

#ສໍາລັບເງິນທີ່ເຫຼືອແມ່ນຈະໄດ້ດໍາເນີນການຕາມຂັ້ນຕອນ ແລະ ລະບຽບການ ເພື່ອໃຫ້ຜູ້ປະສົບໄພໄດ້ຮັບຄວາມຊ່ວຍເຫຼືອຢ່າງແທ້ຈິງ ແລະ ຈະແຈ້ງໃຫ້ສັງຄົມຊາບແຕ່ລະໄລຍະ.

ໂອກາດນີ້ຂໍຮຽນຕາງໜ້າຜູ້ປະສົບໄພ ສະແດງຄວາມຂອບໃຈມາຍັງທຸກທ່ານທີ່ໄດ້ຮ່ວມບໍລິຈາກຊ່ວຍຜູ້ປະສົບໄພພິບັດນໍ້າຖ້ວມທີ່ ແຂວງ ອັດຕະປື ຜ່ານ BCEL OneHeart ຂໍອວຍພອນໃຫ້ທ່ານ ຈົ່ງມີຄວາມສຸກຄວາມຈະເລີນກ້າວໜ້າດ້ວຍ.

ທ່ານກໍ່ສາມາດມີສ່ວນຮ່ວມແບ່ງປັນນໍ້າໃຈຊ່ວຍເຫຼືອສັງຄົມ ຜ່ານ BCEL One Heart ດ້ວຍຕົວທ່ານເອງໄດ້. BCEL One Heart ຫົວໃຈດວງດຽວກັນ (ສະດວກວ່ອງໄວໂປ່ງໃສ) ຂໍ້ມູນເພີ່ມເຕີມ: Website: www.oneheart.la



ຮູບພາບ: ການມອບ-ຮັບເງິນທີ່ໄດ້ຮັບການບໍລິຈາກຜ່ານ BCEL One Heart ເພື່ອຊ່ວຍເຫຼືອຜູ້ໄດ້ຮັບໄພພິບັດນໍ້າຖ້ວມທີ່ແຂວງອັດຕະປື

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ

1555 | BCEL Bank | www.bcel.com.la